ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ຫ້ອງການກະຊວງ

ເລກທີ 1056 /ຫກຊ.ລດທ

ນະຄອນຫຼວງວຽງຈັນ, ວັນທີ 17 ມິຖຸນາ 2020

# ແຈ້ງການ

ຮຽນ:
- ທ່ານ ຫົວໜ້າ ຫ້ອງການ ບັນດາກະຊວງ/ອົງການທຽບເທົ່າ, ຫ້ອງການປົກຄອງແຂວງ/ນະຄອນຫຼວງ
- ບັນດາພະແນກ ປທສ ແຂວງ/ນະຄອນຫຼວງ
- ບັນດາບໍລິສັດໂທລະຄົມມະນາຄົມ ແລະ ອິນເຕີເນັດ
- ບັນດາຜູ້ນຳໃຊ້ເລກໝາຍໂທລະສັບ ແລະ ຊິມເນັດ

ເລື່ອງ: ການຂຶ້ນທະບຽນເລກໝາຍໂທລະສັບ ແລະ ຊິມເນັດ ໃນທົ່ວປະເທດ

- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກ ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ, ສະບັບເລກທີ 366/ຫລບ, ລົງວັນທີ 6 ກັນຍາ 2011;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ, ສະບັບເລກທີ 903/ປທສ,ລົງວັນທີ 30 ມີນາ 2020.

ຫ້ອງການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ(ປທສ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ ເພື່ອເປັນການຄຸ້ມຄອງການນຳໃຊ້ເລກໝາຍໂທລະສັບໃນໄລຍະໃໝ່ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍດີ ຈຶ່ງຈຳເປັນຕ້ອງໄດ້ມີການຂຶ້ນທະບຽນເລກໝາຍໂທລະສັບ ແລະ ຊິມເນັດ ຄືນໃໝ່ ດັ່ງລາຍລະອຽດລຸ່ມນີ້:

1. ເລີ່ມຈັດຕັ້ງປະຕິບັດ ວັນທີ 01/07/2020 ເຖິງ 31/12/2020, ໂດຍແບ່ງອອກເປັນ ສາມ ໄລຍະຄື:

   <u>ໄລຍະທີ 1</u>: 01/07/2020-30/11/2020, ໃຫ້ລົງທະບຽນເລກໝາຍໂທລະສັບ ແລະ ອິນເຕີເນັດ ທີ່ໄດ້ນຳໃຊ້ຄືນໃໝ່ທັງໝົດ ແລະ ບໍ່ອະນຸຍາດໃຫ້ເລກໝາຍໃໝ່ທີ່ບໍ່ທັນຂຶ້ນທະບຽນສາມາດນຳໃຊ້ໄດ້ຢ່າງເດັດຂາດ.

   <u>ໄລຍະທີ 2</u>: 01/12/2020-31/12/2020,ນຳເບີທີ່ຍັງບໍ່ທັນຂຶ້ນທະບຽນເລກໝາຍໂທລະສັບ ແລະ ຊິມເນັດ ແມ່ນ ຍັງສາມາດຮັບໂທລະສັບໄດ້ ແຕ່ບໍ່ສາມາດໂທອອກໄດ້(ຍົກເວັ້ນເບີສຸກເສີນ) ແລະ ບໍ່ສາມາດຫຼິ້ນເນັດໄດ້ ແຕ່ຍັງຈະຮັກສາມູນຄ່າທີ່ຍັງເຫຼືອໄວ້ໃນລະບົບ.

   <u>ໄລຍະທີ 3</u>: ຫຼັງຈາກ 31/12/2020, ນຳເບີທີ່ຍັງບໍ່ທັນຂຶ້ນທະບຽນເລກໝາຍໂທລະສັບ ແລະ ຊິມເນັດ ຈະຖືກລົບອອກຈາກລະບົບຢ່າງຖາວອນ, ແຕ່ບໍລິສັດຜູ້ໃຫ້ບໍລິການ ສາມາດເປີດຄືນໃຫ້ຜູ້ນຳໃຊ້ເລກໝາຍໂທລະສັບ ແລະ ຊິມເນັດຄືນໃໝ່ ຖ້າຫາກເບີດັ່ງກ່າວໄດ້ຮັບການຂຶ້ນທະບຽນເລກໝາຍໂທລະສັບ ແລະ ຊິມເນັດ ສຳເລັດ.

2. ໃຫ້ບັນດາບໍລິສັດ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ສົມທົບກັບພະແນກ ປທສ ແຂວງ/ນະຄອນຫລວງ ເປັນເຈົ້າການຈັດຕັ້ງປະຕິບັດ ການຂຶ້ນທະບຽນເລກໝາຍໂທລະສັບ ແລະ ຊິມເນັດດັ່ງນີ້ ໃຫ້ໄດ້ຮັບຜົນສຳເລັດ.
3. ຂໍໃຫ້ບັນດາກະຊວງ, ອົງການ/ທຽບເທົ່າ, ບັນດາແຂວງ/ນະຄອນຫຼວງ, ບັນດາພະແນກ ປທສ ແຂວງ/ນະຄອນຫຼວງ ແລະ ບັນດາບໍລິສັດ ໂທລະຄົມມະນາຄົມ ແລະອິນເຕີເນັດ ຊ່ວຍສົ່ງເສີມໃນການປຸກລະດົມ, ຊຸກຍູ້, ເຜີຍແຜ່ ແລະ ແຈ້ງໃຫ້ຜູ້ທີ່ນຳໃຊ້ເລກໝາຍໂທລະສັບ ແລະ ຊິມເນັດ ໃຫ້ມາຂຶ້ນທະບຽນໃຫ້ຖືກຕ້ອງຕາມລະບຽບການຂອງກະຊວງ ປທສ ໃນເວລາທີ່ກຳນົດໄວ້ (ເອກະສານຕ່າງໆທີ່ກ່ຽວຂ້ອງແມ່ນໄດ້ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຮກ. ຫ້ອງການກະຊວງ

ອະລຸສໄຊ ດາລາລອຍ

ກະຊວງໄປສະນີໂທລະຄົມ ມະນາຄົມ ແລະ ການສື່ສານ

# ບົດແນະນຳ ການຂຶ້ນທະບຽນເລກໝາຍໂທລະສັບ

**ນະຄອນຫຼວງວຽງຈັນ, ມິຖຸນາ 2020**

# ແນະນຳການຂຶ້ນທະບຽນເລກໝາຍໂທລະສັບ

ການຂຶ້ນທະບຽນເລກໝາຍໂທລະສັບ ປະເພດລາຍເດືອນ, ຕື່ມເງິນ ແລະ ຊິມເນັດ ທີ່ທ່ານກຳລັງນຳໃຊ້ ຫຼື ຈະເປີດນຳໃຊ້ໃໝ່, ທ່ານສາມາດຂຶ້ນທະບຽນໄດ້ ໂດຍຜ່ານ 2 ວິທີ ຄື:

**ວິທີທີ່ 1:** ສຳລັບເລກໝາຍເກົ່າທີ່ເປີດນຳໃຊ້ແລ້ວ ແລະ ເລກໝາຍທີ່ຈະເປີດນຳໃຊ້ໃໝ່ ແມ່ນທ່ານ ສາມາດໄປຂຶ້ນທະບຽນໄດ້ທີ່ຢູ່ຕາມສູນບໍລິການ, ສຳນັກງານໃຫຍ່, ຫ້ອງການສາຂາຂອງຜູ້ໃຫ້ບໍລິການ ແລະ ຕົວແທນຈຳໜ່າຍທີ່ໄດ້ຮັບອະນຸຍາດໃນຂອບເຂດທົ່ວປະເທດ ,ພຽງແຕ່ທ່ານນຳເອົາເລກໝາຍໂທລະສັບຂອງທ່ານ ແລະ ເອກະສານຢັ້ງຢືນໃດໜຶ່ງ ເຊັ່ນ: ບັດປະຈຳຕົວ, ໜັງສືຜ່ານແດນ (ພາສປອດ), ຫຼື ປື້ມສຳມະໂນຄົວ ທີ່ຍັງບໍ່ທັນໝົດອາຍຸນຳມາຂຶ້ນທະບຽນ.

**ວິທີທີ່ 2:** ວິທີນີ້ໃຊ້ສຳລັບເລກໝາຍເກົ່າທີ່ເປີດນຳໃຊ້ແລ້ວເທົ່ານັ້ນ ເຊິ່ງທ່ານສາມາດດຳເນີນການຂຶ້ນທະບຽນເລກໝາຍໂທລະສັບ ດ້ວຍຕົວເອງຜ່ານທາງອອນລາຍ ໂດຍວິທີນີ້ຈະເລີ່ມຕົ້ນເປີດໃຫ້ສາມາດຂຶ້ນທະບຽນໄດ້ນັບຈາກ ວັນທີ 01 ກໍລະກົດ 2020 ເປັນຕົ້ນໄປ ດັ່ງຄູ່ມືລຸ່ມນີ້ :

# ສາລະບານ


ຂັ້ນຕອນທີ 1 : ດາວໂຫຼດ ແລະ ຕິດຕັ້ງ ລະບົບ Lao KYC.......................................................1

ຂັ້ນຕອນທີ 2 : ຂຶ້ນທະບຽນຜ່ານແອັບ 3 ແກ໊ບ.......................................................3

ຂັ້ນຕອນທີ 3 : ເລືອກເຄືອຂ່າຍທີ່ທ່ານນຳໃຊ້.......................................................6

ຂັ້ນຕອນທີ 4 : ເລືອກປະເພດເອກະສານຢັ້ງຢືນຕົວຕົນ.......................................................7

ຂັ້ນຕອນທີ 5 : ຖ່າຍຮູບໃບໜ້າເຈົ້າຂອງຊິມ.......................................................8

ຂັ້ນຕອນທີ 6 : ຖ່າຍຮູບເອກະສານຢັ້ງຢືນໂຕຕົນ.......................................................8

ຂັ້ນຕອນທີ 7 : ປ້ອນຂໍ້ມູນພື້ນຖານຂອງເຈົ້າຂອງຊິມ.......................................................9

ຂັ້ນຕອນທີ 8 : ສຳເລັດການຂຶ້ນທະບຽນຊິມ.......................................................9

ຄຳແນະນຳເພີ່ມເຕີມ : …………………….......................................................10

# ຂັ້ນຕອນທີ 1




1. ເຂົ້າໄປທີ່ Android PlayStore ພິມ “LaoKYC” ເພື່ອຄົ້ນຫາແລະຕິດຕັ້ງ
2. ຫຼັງຈາກດາວໂຫຼດສຳເລັດໃຫ້ກົດອະນຸຍາດສິດໃນການເຂົ້າເຖິງອຸປະກອນຂອງທ່ານ
3. ກົດປຸ່ມເພື່ອເຂົ້າສູ່ລະບົບ
4. ກົດປຸ່ມເພື່ອຍອມຮັບເງື່ອນໄຂ

5




5. ປ້ອນໝາຍເລກໂທລະສັບຂອງທ່ານ

ແລ້ວກົດຢືນຢັນ

(ຖ້າຂຶ້ນທະບຽນ LaoKYC ສຳເລັດແລ້ວ ລະບົບຈະແຈ້ງວ່າ

ຍິນດີຕ້ອນຮັບເຂົ້າສູ່ລະບົບ LaoKYC )

# ຂັ້ນຕອນທີ 2

1




- ຖ່າຍຮູບຂອງຕົນເອງ
- ປ້ອນຊື່ຂອງທ່ານ
- ປ້ອນນາມສະກຸນ
- ກົດຍອມຮັບເງື່ອນໄຂຕ່າງໆ ແລ້ວກົດ "ຢືນຢັນ"

2




- ກົດໄປທີ່ເມນູ "ບໍລິການ"
- ກົດທີ່ Icon "3 ແກັບຂຶ້ນທະບຽນຊິມ"

3




- ຢືນຢັນເບີໂທລະສັບຂອງທ່ານ
- ປຸ່ມ "ຕົກລົງ" ເພື່ອດຳເນີນການຕໍ່ໄປ

4







1. ປ້ອນ OTP 6 ໂຕເລກທີ່ໄດ້ຮັບຈາກຂໍ້ຄວາມ
2. ກົດປຸ່ມຕົກລົງເພື່ອຢືນຢັນ
3. ໃນກໍລະນີທີ່ບໍ່ໄດ້ຮັບຂໍ້ຄວາມ OTP 6 ໂຕເລກ ແມ່ນສາມາດກົດຂໍລະຫັດຜ່ານ OTP ອີກຄັ້ງ




ຂໍ້ຄວາມແຈ້ງເຕືອນ

ເມື່ອຢືນຢັນ OTP ສໍາເລັດ







6. ກໍລະນີຂຶ້ນທະບຽນຊິມແລ້ວຈະສະແດງຂໍ້ຄວາມ “ເບີ 20xxxxxxxx ຂຶ້ນທະບຽນຊິມສໍາເລັດ”

7. ກໍລະນີ້ຍັງບໍ່ເຄີຍລົງທະບຽນຜ່ານ ແອັບ 3 ແກ້ບ ແມ່ນໃຫ້ກົດປຸ່ມ “ເຂົ້າໄປຂຶ້ນທະບຽນຊິມ”

# ຂັ້ນຕອນທີ 3

1




ລະບົບຈະສະແດງສັນຍາລັກເບີທີ່ທ່ານໃຊ້ (ຕົວຢ່າງ: ເບີຫົກ 5 ຈະສະແດງສັນຍາລັກ ລາວໂທລະຄົມ)

2




ລະບົບຈະເລືອກເຄືອຂ່າຍທີ່ທ່ານໃຊ້ ໃນຟອມໜ້າປ້ອນຂໍ້ມູນ

# ຂັ້ນຕອນທີ 4




1. ເລືອກປະເພດເອກະສານຢັ້ງຢືນໂຕຕົນທີ່ຍັງບໍ່ທັນໝົດອາຍຸ ເຊິ່ງສາມາດໃຊ້ໄດ້ທັງ
    - ປື້ມສຳມະໂນຄົວ
    - ໜັງສືຜ່ານແດນ(ພາສປອດ)
    - ບັດປະຈຳຕົວ
2. ກົດປຸ່ມດຳເນີນການຕໍ່

# ຂັ້ນຕອນ 5 : ຖ່າຍຮູບໃບໜ້າເຈົ້າຂອງຊິມ




1. ການຖ່າຍຮູບ ແມ່ນໃຫ້ຜູ້ທີ່ຕ້ອງການຂຶ້ນທະບຽນ ນັ້ນ ຖືເອກະສານຢັ້ງຢືນຕົວຕົນໄວ້ໃນຕໍາແໜ່ງທີ່ສາມາດ ຖ່າຍພາບໄດ້ພ້ອມກັບໃບໜ້າໄດ້ຢ່າງຊັດເຈນ ດັ່ງພາບປະກອບ
2. 

" ໃຫ້ເຫັນໃບໜ້າ ແລະ ເອກະສານຄູ່ກັນ ຢ່າງຊັດເຈນ "

# ຂັ້ນຕອນ 6 : ຖ່າຍຮູບເອກະສານຢັ້ງຢືນໂຕຕົນ




1. ຫັນກ້ອງໄປທີ່ເອກະສານທີ່ຈະໃຊ້ໃນການຢັ້ງຢືນ ຕົວຕົນ ໂດຍໃຫ້ໝັ້ນໃຈວ່າເອກະສານນັ້ນຢູ່ໃນ ກອບສີ່ຫຼ່ຽມທີ່ກໍານົດ ແລະ ສາມາດເຫັນລາຍ ລະອຽດຂອງເອກະສານເປັນຢ່າງດີ
2. ຫາກຕ້ອງການປ່ຽນປະເພດເອກະສານທີ່ໃຊ້ ແມ່ນສາມາດກົດປ່ຽນໄດ້ໃນຂັ້ນຕອນນີ້
3. 

" ໃຫ້ເຫັນລາຍລະອຽດ ເອກະສານຢ່າງຊັດເຈນ "

# ຂັ້ນຕອນ 7 : ປ້ອນຂໍ້ມູນພື້ນຖານເຈົ້າຂອງຊິມ




1. ປ້ອນຊື່ແທ້ຂອງເຈົ້າຂອງຊິມ
2. ປ້ອນນາມສະກຸນເຈົ້າຂອງຊິມ
3. ເລືອກເພດ
4. ໝາຍເລກຊິມທີ່ຕ້ອງການຂຶ້ນທະບຽນ

   (ຖ້າເປັນຊິມມືຖືໃຫ້ຂຶ້ນຕົ້ນດ້ວຍ 20XXXXXXXX, ຖ້າເປັນຊິມວິນໂຟນໃຫ້ຂຶ້ນຕົ້ນດ້ວຍ 30XXXXXXX).
5. ກົດປຸ່ມຢືນຢັນ

   ແນະນຳ : ໃນໜ້ານີ້ຈະເປັນໜ້າກວດສອບຄວາມຖືກຕ້ອງຂອງຂໍ້ມູນຄືນ, ຜູ້ຂຶ້ນທະບຽນສາມາດກົດໃສ່ຮູບພາບເພື່ອຖ່າຍໃໝ່ ຫາກຮູບພາບນັ້ນບໍ່ຊັດເຈນ

# ຂັ້ນຕອນ 8 : ສຳເລັດການຂຶ້ນທະບຽນຊິມ




ຖ້າເຫັນຂໍ້ຄວາມຂຶ້ນ "ສະແດງຄວາມຍິນດີ ທ່ານໄດ້ຂຶ້ນທະບຽນເບີ 20XXXXXXXX ສຳເລັດ" ຖືວ່າຈົບຂັ້ນຕອນການຂຶ້ນທະບຽນ

# ຄຳແນະນຳເພີ່ມເຕີມ

# ພາຍຫຼັງສຳເລັດ 8 ຂັ້ນຕອນທີ່ກ່າວມາຂ້າງເທິງ ຖືວ່າການຂຶ້ນທະບຽນຊິມຂອງທ່ານປະສົບຜົນສຳເລັດໃນເບື້ອງຕົ້ນ. ຫຼັງຈາກນັ້ນ, ຂໍ້ມູນຂອງທ່ານຈະໄດ້ຮັບການກວດກາຢັ້ງຢືນຄວາມຖືກຕ້ອງ ຈາກຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລ້ວແຈ້ງຜົນການຂຶ້ນທະບຽນຜ່ານທາງຂໍ້ຄວາມສັ້ນ ໃຫ້ທ່ານຮັບຊາບ.

# ອີກໜຶ່ງຊ່ອງທາງທ່ານສາມາດກວດຜົນການຂຶ້ນທະບຽນເລກໝາຍໂທລະສັບໄດ້ດ້ວຍຕົນເອງໂດຍຜ່ານທາງ USSD Code ພຽງແຕ່ກົດ *1021# ແລ້ວໂທອອກ

# ຖ້າທ່ານຕ້ອງການຄຳແນະນຳເພີ່ມເຕີມ ຫຼື ພົບບັນຫາໃນການຂຶ້ນທະບຽນ, ທ່ານສາມາດ ຫາຂໍ້ມູນເພີ່ມຕື່ມໄດ້ຕາມຊ່ອງທາງລຸ່ມນີ້:

1. ຜ່ານທາງເວັບໄຊ www.simreg.gov.la
2. ໂທສອບຖາມໄດ້ທີ່ໝາຍເລກ Call Center ຂອງແຕ່ລະບໍລິສັດໂທລະຄົມ ດັ່ງນີ້:

ຖ້າທ່ານໃຊ້ເບີທີ່ຂຶ້ນຕົ້ນດ້ວຍຫຼັກ 5 ແມ່ນໂທຫາ ເບີ 101

ຖ້າທ່ານໃຊ້ເບີທີ່ຂຶ້ນຕົ້ນດ້ວຍຫຼັກ 2 ແມ່ນໂທຫາ ເບີ 135

ຖ້າທ່ານໃຊ້ເບີທີ່ຂຶ້ນຕົ້ນດ້ວຍຫຼັກ 9 ແມ່ນໂທຫາ ເບີ 178

ຖ້າທ່ານໃຊ້ເບີທີ່ຂຶ້ນຕົ້ນດ້ວຍຫຼັກ 7 ແມ່ນໂທຫາ ເບີ 123